ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຫ້ອງການກະຊວງ

ເລກທີ: 1064-? /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 06/04/2026

ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ

ລະຫັດປະມູນເລກທີ : RFQ C2.1-G-15

## ໜັງສືເຊີນ ເຂົ້າຮ່ວມການປະມູນສົມທຽບລາຄາ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2026 ເພື່ອດໍາເນີນການປະມູນຈັດຊື້-ຈັດຈ້າງ **ຜະລິດຖົງຜ້າຝ້າຍ, ປຶ້ມບັນທຶກ ແລະ ບິກຂຽນ ລຸ້ນສໍາພັດໄດ້ (ສະກີນໂລໂກ້ ແລະ ຕົວໜັງສື)** ສໍາລັບ ເພື່ອສົ່ງເສີມເອກະລັກ ແລະ ແຈກຢາຍ ໂຄສະນາວຽກງານຂອງຈຸດບໍລິການຈັດຫາງານ ຂັ້ນສູນກາງ ແລະ ຂັ້ນແຂວງ ທົ່ວປະເທດ. ດ້ວຍການປະມູນແບບສົມທຽບລາຄາ.
2. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງປະມູນແບບສົມທຽບລາຄາ ສໍາລັບການຈັດຊື້-ຈັດຈ້າງ **ຜະລິດຖົງຜ້າຝ້າຍ, ປຶ້ມບັນທຶກ ແລະ ບິກຂຽນ ລຸ້ນສໍາພັດໄດ້ (ສະກີນໂລໂກ້ ແລະ ຕົວໜັງສື)** ສໍາລັບ ເພື່ອສົ່ງເສີມເອກະລັກ ແລະ ແຈກຢາຍ ໂຄສະນາວຽກງານຂອງຈຸດບໍລິການຈັດຫາງານ ຂັ້ນສູນກາງ ແລະ ຂັ້ນແຂວງ ທົ່ວປະເທດ. ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ **[60 ວັນ]**.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **09:45 ໂມງ, ວັນທີ 29 ເມສາ 2026,** ທີ່ **ຫ້ອງປະຊຸມກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999. Email:** ctvs.bee368@gmail.com
   **cc:** psgproject.proc@gmail.com; phonemalykhattiya@gmail.com ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ **09:55 ໂມງ, ວັນທີ 29 ເມສາ 2026** ໂດຍຊ້ອງໜ້າ ຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

**(ຫົວໜ້າໂຄງການ)**

ບຸນຍອດ ຈັນທະວອນ